ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********

ເຈົ້າແຂວງຫຼວງພະບາງ

ເລກທີ 536 /ຈຂ-ຫຼບ

ລົງວັນທີ 31 ທັນວາ(12)2021

## ຂໍ້ຕົກລົງ

### ວ່າດ້ວຍການຕົກລົງແຕ່ງຕັ້ງ ຄະນະບໍລິຫານງານ, ກອງເລຂາ ແລະ ສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວແຂວງຫຼວງພະບາງ (LuangPrabang Destination Management Network – DMN).

---

- ອີງຕາມ ໜັງສືສະເໜີ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ສະບັບ ເລກທີ 167/ຖວທຂ, ລົງວັນທີ 27 ທັນວາ(12)2021.

**ເຈົ້າແຂວງຫຼວງພະບາງຕົກລົງ:**

ມາດຕາ 1 : ຕົກລົງແຕ່ງຕັ້ງ ຄະນະບໍລິຫານງານ, ກອງເລຂາ ແລະ ສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວແຂວງຫຼວງພະບາງ (LuangPrabang Destination Management Network – DMN) ເຊິ່ງປະກອບມີດັ່ງນີ້:

I. **ແຕ່ງຕັ້ງຄະນະຊີ້ນຳຄະນະບໍລິຫານງານເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວແຂວງຫຼວງ (DMN) ເຊິ່ງປະກອບມີບັນດາທ່ານ ດັ່ງນີ້:**

| | | |
|---|---|---|
| 1. ທ່ານ ປອ ນາງ ສຸດາພອນ ຄົມທະວົງ | ຫົວໜ້າ ພະແນກ ຖວທ ແຂວງ | ເປັນຫົວໜ້າ. |
| 2. ທ່ານ ກິ່ງຈັກກີ ພັນທະສົມບັດ | ປະທານສະມາຄົມທຸລະກິດທ່ອງທ່ຽວ | ເປັນຮອງ. |
| 3. ທ່ານ ນາງ ຕຸ່ນ ສີສຸພັນທະວົງ | ປະທານສະມາຄົມໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຮ້ານນວດ-ສະປາ ແລະ ບັນເທີງ-ຄາລາໂອເກະ | ເປັນຮອງ. |
| 4. ທ່ານ ທະຫວິນ ມະໂນລິດ | ຮອງປະທານສະມາຄົມທຸລະກິດທ່ອງທ່ຽວ | ເປັນຄະນະ. |
| 5. ທ່ານ ນາງ ແວວມະນີ ດວງດາລາ | ຮອງປະທານ ສຄອຊ ແຂວງຫຼວງພະບາງ | ເປັນຄະນະ. |

\+ **ໜ້າທີ່ຂອງຄະນະບໍລິຫານເຄືອຂ່າຍ DMN ແຂວງຫຼວງພະບາງ ມີດັ່ງນີ້:**

1) ໃຫ້ທິດຊີ້ນຳໃນການສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳ ພາກລັດ ແລະ ພາກທຸລະກິດ ໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງແຂວງຫຼວງພະບາງ ປະຈຳປີຜ່ານກອງປະຊຸມເຄືອຂ່າຍ DMN ແຂວງຫຼວງພະບາງທີ່ຈະໄດ້ຈັດຂຶ້ນຢ່າງໜ້ອຍ 02 ຄັ້ງຕໍ່ປີ ໂດຍການເປັນເຈົ້າການຮ່ວມກັນ ລະຫວ່າງ ພາກລັດ ແລະ ພາກທຸລະກິດ;

2) ເປັນຜູ້ນຳສະເໜີ ຫຼື ລາຍງານໃນດ້ານການຈັດຕັ້ງປະຕິບັດໜ້າວຽກຕົວຈິງໂດຍສະເພາະແມ່ນ ບັນດາອຸປະສັກ ກ່ຽວກັບ ດ້ານພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວແຂວງຫຼວງພະບາງ ແລະ ໜ້າວຽກທີ່ຕິດພັນກັບຂະແໜງການປົກອ້ອມ ເພື່ອນຳສະເໜີຕໍ່ຂັ້ນເທິງພິຈາລະນາ ແລະ ຊອກຫາວິທີແກ້ໄຂຮ່ວມກັນ.

II. **ແຕ່ງຕັ້ງກອງເລຂາເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ DMN ແຂວງຫຼວງພະບາງ ເຊິ່ງປະກອບມີບັນດາທ່ານ ດັ່ງນີ້:**

| | | |
|---|---|---|
| 1. ທ່ານ ໜຸ້ຍ ວົງມະນີຈັນ | ຫົວໜ້າຂະແໜງທ່ອງທ່ຽວພັດທະນາການທ່ອງທ່ຽວ | ເປັນຫົວໜ້າ. |
| 2. ທ່ານ ນາງ ວັນທອງ ພົນຫຼັກທຳ | ວິຊາການຂະແໜງພັດທະນາການທ່ອງທ່ຽວ | ເປັນຮອງ. |
| 3. ທ່ານ ພອນປະສິດ ຄົມທະວົງ | ວິຊາການຂະແໜງຄຸ້ມຄອງການທ່ອງທ່ຽວ | ເປັນຄະນະ. |
| 4. ທ່ານ ນາງ ເພັດອານົງ ພົງສະຫວັດ | ຄະນະສະມາຄົມທຸລະກິດທ່ອງທ່ຽວ | ເປັນຄະນະ. |
| 5. ທ່ານ ນາງ ສົມຈິດ ກິລະວົງ | ຄະນະກຸ່ມພະນັກງານນຳທ່ຽວ | ເປັນຄະນະ. |
| 6. ທ່ານ ສົມນຶກ ບຸນສາ | ຄະນະສະພາອຸດສາຫະກຳ ແລະ ການຄ້າແຂວງ | ເປັນຄະນະ. |

**+ ກອງເລຂາເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ DMN ແຂວງຫຼວງພະບາງ ມີໜ້າທີ່ດັ່ງນີ້:**

- ປະສານງານກັບບັນດາພາກລັດ, ພາກທຸລະກິດ, ໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວ ແຂວງຫຼວງພະບາງ ເພື່ອສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳພາກລັດ ແລະ ພາກທຸລະກິດ ໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ແຂວງຫຼວງພະບາງ ປະຈຳປີ. ນອກຈາກນັ້ນ, ຍັງມີໜ້າທີ່ ຂອງກອງເລຂາເຄືອຂ່າຍແມ່ນມີດັ່ງນີ້:

1) ປະສານງານຈັດກອງປະຊຸມເຄືອຂ່າຍ DMN ແຂວງຫຼວງພະບາງ ຢ່າງໜ້ອຍ 02 ຄັ້ງຕໍ່ປີ: ກະກຽມວາລະກອງປະຊຸມ, ຮ່າງບັດເຊີນ, ກະກຽມສະຖານທີ່, ເອກະສານ ແລະ ອຸປະກອນສຳລັບກອງປະຊຸມ, ຂຶ້ນແຜນງົບປະມານ ແລະ ເຊີນຜູ້ເຂົ້າຮ່ວມ. ບັນທຶກເນື້ອໃນກອງປະຊຸມ, ເຮັດບົດລາຍງານ ແລະ ແຈກຢາຍໃຫ້ແກ່ສະມາຊິກເຄືອຂ່າຍພາຍຫລັງສຳເລັດກອງປະຊຸມ;

2) ປະສານງານກັບພາກລັດ, ພາກທຸລະກິດ, ໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວ ແຂວງຫຼວງພະບາງ ເພື່ອຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳພາກລັດ ແລະ ພາກທຸລະກິດ.

III. **ແຕ່ງຕັ້ງຄະນະສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ DMN ແຂວງຫຼວງພະບາງ ເຊິ່ງປະກອບມີບັນດາທ່ານ ດັ່ງນີ້:**

| | | |
|---|---|---|
| 1. ທ່ານ ນາງ ດາລຸນນີ ຊະນະແກ້ວ | ຮອງປະທານສະມາຄົມໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຮ້ານນວດ-ສະປາ ແລະ ບັນເທີງ-ຄາລາໂອເກະ | ເປັນຫົວໜ້າ. |
| 2. ທ່ານ ວົງດາວອນ ວົງໄຊຍະລາດ | ຫົວໜ້າຂະແໜງໂຄສະນາການທ່ອງທ່ຽວ, ພະແນກ ຖວທ | ເປັນຮອງ. |
| 3. ທ່ານ ນາງ ບຸນຖະໜອມ ແສງມະນີ | ຮອງຫົວໜ້າຂະແໜງຄຸ້ມຄອງການທ່ອງທ່ຽວ, ພະແນກ ຖວທ | ເປັນຄະນະ. |
| 4. ທ່ານ ອາຄົມ ພົມມະຫານ | ເຈົ້າຂອງແຫຼ່ງທ່ອງທ່ຽວສວນດອກໄມ້ຮ້ອຍຄີວ | ເປັນຄະນະ. |
| 5. ທ່ານ ນາງ ລີ ທະນູທອງ | ຄະນະກຸ່ມພະນັກງານນຳທ່ຽວ | ເປັນຄະນະ. |
| 6. ທ່ານ ນາງ ບົວແກ້ວ ຮຸ່ງອາລຸນ | ຄະນະສະມາຄົມໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຮ້ານນວດ-ສະປາ ແລະ ບັນເທີງ-ຄາລາໂອເກະ | ເປັນຄະນະ. |
| 7. ທ່ານ ນາງ ເພັດກະຈອນ ມີໄຊພົນ | ຄະນະສະມາຄົມໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຮ້ານນວດ-ສະປາ ແລະ ບັນເທີງ-ຄາລາໂອເກະ | ເປັນຄະນະ. |

| | | |
|---|---|---|
| 8. ທ່ານ ວຽງສະໄໝ ສີລີລັດ | ຜູ້ຈັດການລັດວິສາຫະກິດ ການບິນລາວ ສາຂາຫຼວງພະບາງ | ເປັນຄະນະ. |
| 9. ທ່ານ ນາງ ອາລີຈິດ | ເມຍສະຫາຍຜູ້ຈັດການໂຮງແຮມສຸວັນນະພູມ | ເປັນຄະນະ. |
| 10. ທ່ານ ແສງມະນີ ໃຈຫຼ້າ | ຄະນະສະມາຄົມໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຮ້ານນວດ-ສະປາ ແລະ ບັນເທີງ-ຄາລາໂອເກະ | ເປັນຄະນະ. |

+ ສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ DMN ແຂວງຫຼວງພະບາງ ມີໜ້າທີ່ດັ່ງນີ້:

- ມີໜ້າທີ່ ປະກອບຄຳຄິດຄຳເຫັນເຂົ້າໃນການສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳ ລະຫວ່າງ ພາກລັດ ແລະ ພາກທຸລະກິດ ໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການ ທ່ອງທ່ຽວຂອງແຂວງຫຼວງພະບາງ ປະຈຳປີຜ່ານກອງປະຊຸມເຄືອຂ່າຍທີ່ ຈະໄດ້ຈັດຂຶ້ນຢ່າງໜ້ອຍ 02 ຄັ້ງຕໍ່ປີ.

**ມາດຕາ 2** : ທຸກອົງການຈັດຕັ້ງທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ມາດຕາ 3** : ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງ ຂອງທ່ານ ເຈົ້າແຂວງຫຼວງພະບາງ ສະບັບ ເລກທີ 267/ຈຂ.ຫຼບ, ລົງວັນທີ 10 ມິຖຸນາ(06)2019.

ເຈົ້າແຂວງຫຼວງພະບາງ

ແຂວງຫຼວງພະບາງ
ເຈົ້າແຂວງ

ຄຳຂັນ ຈັນທະວິສຸກ

+ ບ່ອນນຳສົ່ງ:

- ພະແນກ ຖວທ-ຫຼບ 01 ສະບັບ.
- ສຳເນົາ 02 ສະບັບ.

ທີ່ຢູ່ຫ້ອງວ່າການປົກຄອງແຂວງຫຼວງພະບາງ, ກະຊວງເຈົ້າຟ້າງຸ້ມ, ໂທ (071) 212 001, 212 000, 212128 ແຟັກ (071) 212 407.
BUREAU de' ADMINISTRA PROVINCIALE de LUANGPRABANG
Saleum_yv@hotmail.com